# ພະຍາດຕັບອັກເສບ ບີ

## ທ່ານມີຄວາມສ່ຽງບໍ່?

### ພະຍາດຕັບອັກເສບ ບີ ແມ່ນຫຍັງ?

ພະຍາດຕັບອັກເສບ ບີ ແມ່ນພະຍາດຕັບ. ມັນເກີດຈາກເຊື້ອໄວຣັສຕັບອັກເສບ ບີ. ສຳລັບບາງຄົນທີ່ເປັນພະຍາດຕັບ ອັກເສບ ບີ, ໄວຣັສທີ່ຢູ່ໃນຮ່າງກາຍ, ເຮັດໃຫ້ເກີດການເຈັບເປັນດົນນານຕະຫຼອດຊີວິດ. ພະຍາດຕັບອັກເສບ ບີ ສາມາດເຮັດໃຫ້ເກີດບັນຫາສຸຂະພາບຮ້າຍແຮງໄດ້ເມື່ອເວລາຜ່ານໄປດົນນານ. ບັນຫາເຫຼົ່ານີ້ສາມາດລວມເຖິງມະເຮັງຕັບ ແລະຕັບລົ້ມເຫຼວ.

### ພະຍາດຕັບອັກເສບ ບີ ແຜ່ລາມແນວໃດແດ່?

ພະຍາດຕັບອັກເສບ ບີ ແມ່ນແຜ່ລາມໃນເວລາທີ່ຜູ້ຄົນຕິດແປດເລືອດຈາກບຸກຄົນທີ່ມີພະຍາດ. ຄົນສ່ວນຫຼາຍທີ່ເກີດໃນ ປະເທດລາວ ແລະປະເທດອື່ນໆ ໃນອາຊີ ທີ່ມີເຊື້ອໄວຣັສຕັບອັກເສບ ບີ ແມ່ນຕິດເຊື້ອໃນຕອນເປັນທາລົກ ຫຼື ເປັນເດັກນ້ອຍ. ພະຍາດຕັບອັກເສບ ບີ ສາມາດແຜ່ລາມຈາກແມ່ທີ່ຕິດເຊື້ອໄປຫາທາລົກຂອງຕົນໄດ້ ຫຼື ຈາກສະມາຊິກ ໃນຄອບຄົວໄປຫາເດັກນ້ອຍໄດ້.

ພະຍາດຕັບອັກເສບ ບີ ບໍ່ແມ່ນພະຍາດທາງກຳມະພັນ. ນອກຈາກນີ້ ຜູ້ຄົນຈະບໍ່ຕິດເຊື້ອພະຍາດຕັບອັກເສບ ບີ ຈາກການ ກິນອາຫານຮ່ວມກັນ, ໃຊ້ຖ້ວຍຊາມ ຫຼື ເຄື່ອງໃຊ້ໃນຄົວຮ່ວມກັນກັບບຸກຄົນທີ່ເປັນພະຍາດ. ພະຍາດຕັບອັກເສບ ບີ ບໍ່ແຜ່ລາມຜ່ານການລ້ຽງລູກດ້ວຍນົມແມ່, ການກອດ, ການຈູບ, ການຈັບມືກັນ, ການໄອ, ຫຼື ການຈາມ.

### ພະຍາດຕັບອັກເສບ ບີ ພົບເຫັນໄດ້ທົ່ວໄປແມ່ນບໍ່?

ພະຍາດຕັບອັກເສບ ບີ ແມ່ນພົບເຫັນໄດ້ທົ່ວໄປໃນປະເທດລາວ ແລະປະເທດອື່ນໆ ໃນອາຊີ. ຊາວອາຊີປະມານ 1 ໃນ 12 ຄົນແມ່ນເປັນພະຍາດຕັບອັກເສບ ບີ, ແຕ່ວ່າ ຄົນສ່ວນຫຼາຍແມ່ນບໍ່ຮູ້.

### ອາການຂອງພະຍາດຕັບອັກເສບ ບີ ມີຫຍັງແດ່?

ຄົນສ່ວນຫຼາຍທີ່ເປັນພະຍາດຕັບອັກເສບ ບີ ແມ່ນບໍ່ຮູ້ວ່າ ຕົນເອງມີເຊື້ອພະຍາດນີ້. ພະຍາດນີ້ບໍ່ມີອາການສະເໝີໄປ. ໄວຣັສຕັບອັກເສບ ບີ ສາມາດເຊື່ອງຢູ່ໃນຮ່າງກາຍໄດ້. ຫຼາຍຄົນສາມາດມີຊີວິດຢູ່ກັບພະຍາດຕັບອັກເສບ ບີ ໄດ້ເຖິງ 20 ປີໂດຍບໍ່ມີອາການເຈັບເປັນຫຍັງ. ແຕ່ຢ່າງໃດກໍຕາມ, ພາວະຕັບຖືກທຳລາຍເສັຽຫາຍຈາກພະຍາດນີ້ກໍອາດເກີດຂຶ້ນໄດ້ ໃນຊ່ວງເວລາດັ່ງກ່າວນີ້.

### ພະຍາດຕັບອັກເສບ ບີ ແມ່ນຮ້າຍແຮງສ່ຳໃດ?

ພະຍາດຕັບອັກເສບ ບີ ສາມາດຮ້າຍແຮງໄດ້ຫຼາຍ. ສຳລັບບາງຄົນ, ພະຍາດນີ້ນຳໄປສູ່ພາວະຕັບເສັຽຫາຍ, ເຊັ່ນ ຕັບລົ້ມເຫຼວ ຫຼື ມະເຮັງ.

### ຄົນເຮົາຈະຮູ້ໄດ້ແນວໃດວ່າ ຕົນເອງເປັນພະຍາດຕັບອັກເສບ ບີ ຫຼືບໍ່?

ການທົດສອບຫາພະຍາດຕັບອັກເສບ ບີ ຈະເຮັດໃຫ້ຮູ້ວ່າ ຕົນເອງເປັນພະຍາດນີ້ຫຼືບໍ່. ນີ້ແມ່ນການກວດເລືອດງ່າຍໆ ທີ່ເຈາະເອົາເລືອດພຽງເລັກນ້ອຍຈາກແຂນເທົ່ານັ້ນ. ທ່ານໝໍຈະບໍ່ເຮັດການກວດນີ້ສະເໝີໄປ, ສະນັ້ນ ມັນຈຶ່ງສຳຄັນທີ່ຄວນຖາມເອົາການກວດນີ້.



### ໃຜຄວນໄປຮັບການກວດເບິ່ງພະຍາດຕັບອັກເສບ ບີ?

ການກວດເບິ່ງພະຍາດຕັບອັກເສບ ບີ ແມ່ນແນະນຳສຳລັບ:

- ຄົນທີ່ເກີດໃນປະເທດລາວ ແລະປະເທດອື່ນໆ ໃນອາຊີ
- ຄົນທີ່ມີພໍ່ແມ່ມາຈາກປະເທດລາວ ແລະປະເທດອື່ນໆ ໃນອາຊີ
- ຄົນທີ່ອາໄສຢູ່ກັບຜູ້ທີ່ເປັນພະຍາດຕັບອັກເສບ ບີ

### ເປັນຫຍັງຄົນເຮົາຈຶ່ງຄວນໄປກວດເບິ່ງພະຍາດຕັບອັກເສບ ບີ?

ການໄປກວດນັ້ນຊ່ວຍໃຫ້ບຸກຄົນນັ້ນຮູ້ວ່າ ຕົນເອງເປັນພະຍາດຕັບອັກເສບ ບີ ຫຼືບໍ່. ມີວິທີການປິ່ນປົວພະຍາດຕັບອັກເສບ ບີ ຕ່າງໆ ທີ່ສາມາດຊ່ວຍປ້ອງກັນບໍ່ໃຫ້ຕັບຖືກທຳລາຍຢ່າງຮຸນແຮງ. ຜູ້ຄົນທີ່ຮູ້ວ່າ ຕົນເອງເປັນພະຍາດຕັບອັກເສບ ບີ ຍັງສາມາດຊ່ວຍຮັກສາໃຫ້ສະມາຊິກຄົນອື່ນໆ ໃນຄອບຄົວມີສຸຂະພາບດີດ້ວຍ. ອັນນີ້ຈຶ່ງເປັນເຫດຜົນວ່າ ເປັນຫຍັງຜູ້ຍິງ ຈຶ່ງໄປຮັບການກວດເບິ່ງພະຍາດຕັບອັກເສບ ບີ ສະເໝີ ເມື່ອເຂົາເຈົ້າຖືພາ. ສະມາຊິກໃນຄອບຄົວທີ່ບໍ່ເຄີຍເປັນພະຍາດ ຕັບອັກເສບ ບີ ສາມາດໄປຮັບການສັກວັກແຊງເພື່ອປ້ອງກັນການຕິດເຊື້ອພະຍາດນີ້ໄດ້.

ຜົນການກວດເບິ່ງພະຍາດ ຕັບອັກເສບ ບີ ຈະຖືກເກັບຮັກສາເປັນຄວາມລັບ. ຜູ້ທີ່ເປັນພະຍາດຕັບອັກເສບ ບີ ຈະບໍ່ຖືກບັງຄັບໃຫ້ອອກຈາກ ສະຫະຣັຖອາເມລິກາ. ເຂົາເຈົ້າຈະບໍ່ຖືກໄລ່ອອກຈາກວຽກ, ຫຼື ບໍ່ຖືກບັງຄັບໃຫ້ອອກຈາກໂຮງຮຽນດ້ວຍ.

### ມີການປິ່ນປົວພະຍາດຕັບອັກເສບ ບີ ແນວໃດ?

ຜູ້ຄົນທີ່ເປັນພະຍາດຕັບອັກເສບ ບີ ຄວນໄປຫາໝໍຜູ້ທີ່ມີຄວາມຮູ້ກ່ຽວກັບພະຍາດນີ້. ທ່ານໝໍສາມາດໃຫ້ຢາທີ່ຈະຊ່ວຍຫຼຸດຜ່ອນ ການທຳລາຍຕັບໃຫ້ຊ້າລົງ. ມັນສຳຄັນທີ່ຄວນຖາມທ່ານໝໍກ່ອນທີ່ຈະໃຊ້ຢາສະໝຸນໄພຕ່າງໆໃນການປິ່ນປົວຕັບເນື່ອງຈາກຢານັ້ນອາດເຮັດໃຫ້ປວດຕັບ ຫຼື ເຮັດໃຫ້ເກີດບັນຫາຕໍ່ຢາບາງຢ່າງທີ່ໝໍສັ່ງຈ່າຍໃຫ້.


U.S. Department of Health and Human Services
Centers for Disease Control and Prevention

Hep B United™
ການຮັກຄອບຄົວຂອງທ່ານເລີ່ມດ້ວຍ
ການເອົາໃຈໃສ່ຕົນເອງ

October 2013

Lao Publication No. 221615

# HEPATITIS B

KNOW HEPATITIS B™

## Are You At Risk?

### What is Hepatitis B?

Hepatitis B is a liver disease. It is caused by the Hepatitis B virus. For some people who get Hepatitis B, the virus stays in the body, causing a lifelong illness. Hepatitis B can cause serious health problems over time. These problems can include liver cancer and liver failure.

### How is Hepatitis B spread?

Hepatitis B is spread when someone comes in contact with blood from a person who has the disease. Most people born in Laos and other Asian countries who have Hepatitis B were infected as infants or young children. Hepatitis B can be passed from an infected mother to her baby at birth or from a family member to young children.

Hepatitis B is not a genetic disease. People also do not get Hepatitis B from sharing meals, bowls or utensils with someone who has the disease. Hepatitis B is not spread through breastfeeding, hugging, kissing, holding hands, coughing, or sneezing.

### How common is Hepatitis B?

Hepatitis B is very common in Laos and other Asian countries. Approximately 1 in 12 Asians are living with Hepatitis B, but most people do not know it.

### What are the symptoms of Hepatitis B?

Most people who have Hepatitis B do not know they have it. The disease does not always cause symptoms. Hepatitis B can stay hidden in the body. Many people can live with Hepatitis B for 20 years without feeling sick. Still, liver damage from the disease can take place during this time.

### How serious is Hepatitis B?

Hepatitis B can become very serious. For some people, this disease leads to liver damage, like liver failure or cancer.

### How do people know if they have Hepatitis B?

A Hepatitis B test lets people know if they have it. This is a simple blood test that takes only a little bit of blood from a person's arm. Doctors do not always do this test, so it is important to ask to be tested.



### Who should be tested for Hepatitis B?

Hepatitis B testing is recommended for:

- People born in Laos and other Asian countries
- People whose parents were born in Laos and other Asian countries
- People who live with someone who has Hepatitis B

### Why should people be tested for Hepatitis B?

Getting tested lets a person know if he or she has Hepatitis B. There are treatments available for Hepatitis B that can help prevent serious liver damage. People who find out they have Hepatitis B can also keep other family members healthy. This is why women are always tested for Hepatitis B when they are pregnant. Family members who have never had Hepatitis B can get a vaccine to protect them from getting it.

Hepatitis B test results will be kept confidential. People with Hepatitis B cannot be forced to leave the United States. They also cannot be fired from a job, or forced to leave school.

### How is Hepatitis B treated?

People who have Hepatitis B should see a doctor who is very knowledgeable about the disease. The doctor can give medicines that will slow down liver damage. It is important to ask the doctor before taking any Eastern liver medicines because they might hurt the liver or cause problems with some of the medicines prescribed by the doctor.

U.S. Department of Health and Human Services
Centers for Disease Control and Prevention

Hep B United™
hepbunited.org

cdc.gov/knowhepatitisB

October 2013

Publication No. 221615